# ປົດຂ່າວ

## ກອງປະຊຸມໂຕະມົນປະຈໍາປີ 2018 ຈະກວດກາຄວາມຄືບໜ້າດ້ານການພັດທະນາຂອງ ສປປ ລາວ

***ກອງປະຊຸມເວທີການຮ່ວມມືເພື່ອການພັດທະນາປະຈໍາປີ ຈະໄດ້ຈັດຂຶ້ນທີ່ ວຽງຈັນ ໃນວັນທີ 4-5 ທັນວານີ້***

**ນະຄອນຫຼວງວຽງຈັນ, 9/11/2018** – ສື່ມວນຊົນແຫ່ງຊາດ ໄດ້ຮັບການເຊື້ອເຊີນໃຫ້ເຂົ້າຮ່ວມພິທີພົບປະນັກຂ່າວ ທີ່ກະຊວງແຜນການ ແລະ ການລົງທຶນ ເຊິ່ງລັດຖະບານ ແລະ ອົງການສະຫະປະຊາຊາດ ໄດ້ປະກາດວ່າ ກອງປະຊຸມໂຕະມົນປະຈໍາປີ ຈະໄດ້ຈັດຂຶ້ນທີ່ນະຄອນຫຼວງວຽງຈັນ ໃນວັນທີ 4-5 ທັນນີ້.

ກອງປະຊຸມໂຕະມົນປະຈໍາປີນີ້ ຈະເວົ້າກ່ຽວກັບການທົບທວນກາງສະໄໝຂອງແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຄັ້ງທີ 8. ຫົວຂໍ້ຫຼັກຂອງການສົນທະນາແມ່ນມາຈາກຜົນໄດ້ຮັບຂອງແຜນພັດທະນາດັ່ງກ່າວ ເຊິ່ງປະກອບມີ:

- ການເຕີບໂຕທາງດ້ານເສດຖະກິດແບບກວມລວມ ແລະ ຍືນຍົງ,
- ການພັດທະນາມະນຸດ ແລະ ສັງຄົມ,
- ຊັບພະຍາກອນທໍາມະຊາດ, ການຄຸ້ມຄອງສິ່ງແວດລ້ອມ ແລະ ການກະກຽມຮັບມືກັບໄພພິບັດ, ແລະ
- ບັນຫາອື່ນໆທີ່ປິ່ນອ້ອມ ເຊັ່ນ: ການຄຸ້ມຄອງລັດດ້ວຍກົດໝາຍ, ໄວໜຸ່ມ ແລະ ບົດບາດຍິງ-ຊາຍ.

ນອກຈາກນີ້, ກອງປະຊຸມຍັງຈະໄດ້ມີໂອກາດປຶກສາຫາລືກ່ຽວກັບຜົນຂອງການປະເມີນຄວາມຕ້ອງການຫຼັງເກີດໄພພິບັດ ທີ່ໄດ້ຮັບການດໍາເນີນໃນທົ່ວປະເທດ ໂດຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໂດຍການສະໜັບສະໜຸນຂອງອົງການສະຫະປະຊາຊາດ, ທະນາຄານໂລກ ແລະ ສະຫະພາບເອີຣົບ ເພື່ອປະເມີນຜົນກະທົບຂອງໄພພິບັດທີ່ເກີດຂຶ້ນເມື່ອບໍ່ດົນມານີ້. ການຕັດສິນໃຈກ່ຽວກັບທິດທາງໃນຕໍ່ໜ້າສໍາລັບການຟື້ນຟູ ແລະ ການກໍ່ສ້າງສິ່ງຕ່າງໆຄືນ ລວມທັງການສະໜອງດ້ານງົບປະມານ ຈະເປັນບັນຫາຫຼັກຂອງການແລກປ່ຽນຄໍາຄິດຄໍາເຫັນໃນຄັ້ງນີ້.

ຜົນໄດ້ຮັບຈາກບົດລາຍງານແຫ່ງຊາດແບບສະໝັກໃຈກ່ຽວກັບການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ຂອງ ສປປ ລາວ ທີ່ໄດ້ນໍາສະເໜີທີ່ອົງການສະຫະປະຊາຊາດ ໃນເດືອນກໍລະກົດ ແລະ ມາດຕະການທີ່ເປັນບູລິມະສິດ ເພື່ອບັນລຸວາລະປີ 2030 ກໍຈະໄດ້ຮັບການປຶກສາຫາລືໃນກອງປະຊຸມໃນຄັ້ງນີ້ ເຊັ່ນດຽວກັນກັບ ເສັ້ນທາງສູ່ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ຫຼັງຈາກທີ່ໄດ້ຜ່ານການທົບທວນເງື່ອນໄຂການຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາໃນຕົ້ນປີນີ້.

ກອງປະຊຸມໃນຄັ້ງນີ້ຈະມີບັນດາຄູ່ຮ່ວມພັດທະນາເຂົ້າຮ່ວມ ເພື່ອກວດກາຄວາມຄືບໜ້າທີ່ປະຕິບັດໄດ້ໃນໄລຍະກາງຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8 (2016-2020), ແລະ, ຖອດຖອນບົດຮຽນ ເພື່ອຮ່ວມກັນກຳນົດບູລິມະສິດສຳລັບປີຕໍ່ໆໄປ ລວມທັງການສ້າງແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຄັ້ງຕໍ່ໄປ, ຄັ້ງທີ 9. ນອກຈາກນີ້, ຄະນະຜູ້ແທນກອງປະຊຸມຍັງຈະໄດ້ມີໂອກາດຕິດຕາມຄວາມຄືບໜ້າຂອງການພັດທະນາ ແລະ ຮູບແບບໃໝ່ຂອງການເປັນຄູ່ຮ່ວມມືລະຫວ່າງພາກລັດ-ພາກເອກະຊົນໃນໄລຍະການຢ້ຽມຢາມພາກສະໜາມ.

ໃນພິທີພົບປະນັກຂ່າວມື້ນີ້, ທ່ານ ປອ. ກິແກ້ວ ຈັນທະບູຣີ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ໄດ້ກ່າວວ່າ: "ກອງປະຊຸມໂຕະມົນປະຈຳປີ 2018 ຈະເປັນເວທີທາງການເມືອງທີ່ມີຄວາມສຳຄັນຫຼາຍສຳລັບລັດຖະບານແຫ່ງ ສປປ ລາວ ແລະ ບັນດາຄູ່ຮ່ວມພັດທະນາ ເພື່ອຮ່ວມມືກັນກຳນົດເຄື່ອງມືສຳລັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຄັ້ງ 8 ໃນໄລຍະສຸດທ້າຍ, ໂດຍສະເພາະ ຄວາມຕ້ອງການທີ່ຈະເສີມຂະຫຍາຍການເປັນຄູ່ຮ່ວມ ແລະ ການຮ່ວມມືໃນດ້ານການພັດທະນາໃຫ້ມີປະສິດທິຜົນ ເພື່ອການເຕີບໂຕແບບຍືນຍົງ ແລະ ການກະກຽມສຳລັບແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຄັ້ງ ຄັ້ງທີ 9 (2021-2025)". ທ່ານໄດ້ຢ້ຳ ແລະ ເນັ້ນວ່າ "ລັດຖະບານແຫ່ງ ສປປ ລາວ ມີມຸ່ງໝັ້ນຢ່າງແຮງກ້າທີ່ຈະເຮັດໃຫ້ກອງປະຊຸມໂຕະມົນໃນປີນີ້ ເປັນເວທີທີ່ເປີດກວ້າງ, ສ້າງສັນ ແລະ ແລກປ່ຽນຄຳຄິດຄຳເຫັນຮ່ວມກັນ ໃນໄລຍະເວລາສອງມື້ຂອງກອງປະຊຸມ. ຂ້າພະເຈົ້າຫວັງຢ່າງຍິ່ງວ່າຈະໄດ້ເຫັນການມີສ່ວນຮ່ວມຢ່າງເຕັມສ່ວນຂອງບັນດາພາກສ່ວນທີ່ກ່ຽວຂ້ອງຈາກພາຍໃນ ແລະ ຕ່າງປະເທດໃນທຸກລະດັບ."

ທ່ານ ນາງ ຄາຣິນາ ອິມໂມເນັນ, ຜູ້ປະສານອົງການສະຫະປະຊາຊາດ ແລະ ທັງເປັນຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ເນັ້ນກ່ຽວກັບການເປັນເຈົ້າການຢ່າງຕັ້ງໜ້າຂອງ ສປປ ລາວ ຕໍ່ກັບເປົ້າໝາຍການພັດທະນາແບບຍືນຍົງ ວ່າ: "ຂ້າພະເຈົ້າຢາກຂໍຍົກໃຫ້ເຫັນຄວາມສຳຄັນຂອງການສ້າງແຜນ ແລະ ຍຸດທະສາດການພັດທະນາແຫ່ງຊາດ ກັບວິໄສທັດຮອດປີ 2030 ແລະ ເບິ່ງຄວາມຕ້ອງການຂອງກຸ່ມຄົນທີ່ດ້ອຍໂອກາດທີ່ສຸດ ຫຼື ມີຄວາມສ່ຽງທີ່ສຸດ. ການທົບທວນກາງສະໄໝຂອງແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຄັ້ງທີ 8 ຈະເປັນຫຼັກຖານ ແລະ ບົດຮຽນທີ່ສຳຄັນ ສຳລັບການສ້າງແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຄັ້ງທີ 9, ສົ່ງເສີມການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ແລະ ການສ້າງຄວາມເຂັ້ມແຂງ ເຊິ່ງໃນປະຈຸບັນນີ້ມີຄວາມສຳຄັນຍິ່ງ ພາຍຫຼັງເກີດໄພພິບັດໃນປີນີ້."

ກອງປະຊຸມໂຕະມົນເປັນພາກສ່ວນໜຶ່ງຂອງຂະບວນການໂຕະມົນແຫ່ງຊາດ ເຊິ່ງເປັນກົນໄກໜຶ່ງ ເພື່ອຮັບປະກັນໃຫ້ໄດ້ຮັບຜົນປະໂຫຍດສູງສຸດຈາກການພັດທະນາ. ຂະບວນການໂຕະມົນ ເຊິ່ງມີປະທານ ແລະ ປະທານຮ່ວມໂດຍກະຊວງແຜນການ ແລະ ການລົງທຶນ ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະກອບມີ 10 ກຸ່ມຂະແໜງການ ແລະ 30 ກຸ່ມຂະແໜງການຍ່ອຍ ທີ່ມີການປະສານງານກັນສຳລັບການດຳເນີນງານຂອງຂະແໜງການຕ່າງໆ. ກອງປະຊຸມຂອງບັນດາກຸ່ມຂະແໜງການ ແລະ ກອງປະຊຸມປຶກສາຫາລືກ່ອນກອງປະຊຸມໃນຕົ້ນເດືອນທັນວາ ໄດ້ຮັບການຈັດຂຶ້ນຕະຫຼອດປີ ເຊິ່ງກອງປະຊຸມປຶກສາຫາລືກ່ອນກອງປະຊຸມ ຄັ້ງສຸດທ້າຍຂອງປີນີ້ ແມ່ນກ່ຽວກັບການຟື້ນຟູຫຼັງເກີດໄພພິບັດ ຄາດວ່າຈະໄດ້ຈັດຂຶ້ນປະມານທ້າຍເດືອນພະຈິກນີ້.

ສໍາລັບຂໍ້ມູນເພີ່ມຕື່ມ, ກະລະນາເຂົ້າໄປທີ່ເວັບໄຊໂຕະມິນ:
http://rtm.org.la/

ຕິດຕໍ່:

**ທ່ານ ມໍຣະກົດ ວົງໄຊ, ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ.** ໂທ: +856 2244 8892 ອີເມວ: k_vongxay@hotmail.com

**ທ່ານ ນາງ ອິດິໂກ ຮາໂມສ-ໂຊໂລ, ຊ່ຽວຊານການສື່ສານ, ອົງການສະຫະປະຊາຊາດ ປະຈຳ ສປປ ລາວ.** ໂທ +856 021 267 778, ມືຖື: +856 020 7717 7913
ອີເມວ: ildiko.hamos@one.un.org